ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄຳໄຊ
ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂ
ການລະບາດຂອງພະຍາດໄຄວິດ-19 ຂັ້ນແຂວງ

ເລກທີ 33 /ສພກ.ຂບຊ
ບໍລິຄຳໄຊ, ວັນທີ 18 ກັນຍາ 2021

ແຈ້ງການ

ເຖິງ: ບັນດາພະແນກ, ກອງບັນຊາການ ປກຊ-ປກສ, ບັນດາເມືອງ, ການຈັດຕັ້ງທຸກພາກສ່ວນ ຕະຫຼອດຮອດພໍ່ ແມ່ປະຊາຊົນບັນດາເຜົ່າ ພາຍໃນແຂວງບໍລິຄຳໄຊ.

ເລື່ອງ: ການສືບຕໍ່ຈັດຕັ້ງປະຕິບັດ ບັນດາມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງ ພະຍາດໄຄວິດ-19 ໃນໄລຍະແຕ່ວັນທີ 19 ກັນຍາ ຫາ 3 ຕຸລາ 2021.

- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມ ທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດໄຄວິດ-19.

- ອີງຕາມ ຄຳສັ່ງຂອງທ່ານເຈົ້າແຂວງ ສະບັບເລກທີ 05/ຂບຊ, ລົງວັນທີ 22 ເມສາ 2021 ວ່າດ້ວຍການເພີ່ມທະວີມາດ ຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໄຄວິດ-19;

- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1177/ຫສນຍ, ລົງວັນທີ 15 ກັນຍາ 2021 ກ່ຽວກັບການສືບຕໍ່ປະຕິບັດໃນການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການລະບາດຂອງພະຍາດໄຄວິດ-19 ໃນໄລຍະ ວັນທີ 16 ຫາ 30 ກັນຍາ 2021.

- ອີງຕາມ ຜົນຂອງປະກອງປະຊຸມຄະນະສະເພາະກິດປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໄຄວິດ-19 ຄັ້ງວັນທີ 17 ກັນຍາ 2021.

ຮອງເຈົ້າແຂວງ, ຫົວໜ້າຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໄຄວິດ-19 ຂັ້ນແຂວງ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ: **ອີງຕາມການປະເມີນ ຜົນຂອງການຈັດຕັ້ງປະຕິບັດຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021, ຄຳສັ່ງຂອງທ່ານເຈົ້າແຂວງ ສະບັບເລກທີ05/ຂບຊ, ລົງວັນ ທີ 22 ເມສາ 2021 ແລະ ມາດຕະການຕ່າງໆຂອງຄະນະສະເພາະກິດ, ບັນດາພະແນກການ, ເມືອງໄດຍລວມແລ້ວ ທຸກການຈັດຕັ້ງ , ພະນັກງານ, ທະຫານ, ຕຳຫຼວດ, ຕະຫຼອດຮອດປະຊາຊົນບັນດາເຜົ່າຊາວແຂວງບໍລິຄຳໄຊ ລ້ວນແຕ່ໄດ້ເປັນເຈົ້າການຈັດຕັ້ງ ປະຕິບັດຢ່າງເປັນຂະບວນກວ້າງຂວາງ ແລະ ມີຜົນສຳເລັດໃນຫຼາຍດ້ານ. ຢ່າງໃດກໍຕາມ ແຂວງບໍລິຄຳໄຊຂອງພວກເຮົາ ທີ່ເປັນແຂວງ ຕັ້ງຢູ່ລະຫວ່າງກາງຂອງບັນດາແຂວງທີ່ມີການລະບາດໃນຊຸມຊົນເປັນວົງກວ້າງ ມີຄວາມສ່ຽງສູງທີ່ອາດຈະມີການລະບາດໃນຊຸມຊົນ ເກີດຂຶ້ນຢູ່ແຂວງເຮົາ ເນື່ອງຈາກສາເຫດຕົ້ນຕໍ ຂອງການຕິດເຊື້ອໃນຊຸມຊົນຂອງບັນດາແຂວງ ແມ່ນການເດີນທາງໄປມາລະຫວ່າງ ເມືອງຕໍ່ເມືອງ, ແຂວງຕໍ່ແຂວງ ໂດຍສະເພາະໃນ ເມືອງ ຫຼື ແຂວງທີ່ມີການລະບາດໃນຊຸມຊົນ ແລະ ການດຳເນີນກິດຈະກຳຕ່າງໆໃນ ສັງຄົມຢູ່ຫຼາຍບ່ອນ ຂອງການຈັດຕັ້ງ ແລະ ບຸກຄົນຈຳນວນໜຶ່ງ ບໍ່ທັນປະຕິບັດມາດຕະການຕ້ານ ແລະ ສະກັດກັ້ນພະຍາດໄຄວິດ-19 ໄດ້ຢ່າງຖືກຕ້ອງ ແລະ ເຂັ້ມງວດ. ສະນັ້ນ ຈຶ່ງມີຄວາມຈຳເປັນຕ້ອງໄດ້ເພີ່ມທະວີຄວາມເຂັ້ມງວດ ໃນການປະຕິບັດບັນດາມາດ ຕະການທີ່ໄດ້ລະບຸໃນຄຳສັ່ງ ເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ແລະ ແຈ້ງການຂອງຫ້ອງວ່າການສຳນັກງານ

ນາຍົກລັດຖະມົນຕີ ສະບັບເລກທີ 1177/ຫສນຍ, ລົງວັນທີ 15 ກັນຍາ 2021 ສຳລັບໄລຍະ 15 ວັນໃນຕໍ່ໜ້າແຂວງບໍລິຄຳໄຊຂອງ ພວກເຮົາເລີ່ມຈັດຕັ້ງປະຕິບັດ ແຕ່ເວລາ 00:00 ໂມງ ຂອງວັນທີ 18 ກັນຍາ ຫາ ເວລາ 24:00 ໂມງ ຂອງວັນທີ 3 ຕຸລາ 2021 ໂດຍມີລາຍລະອຽດດັ່ງນີ້:

1. ມາດຕະການສືບຕໍ່ປະຕິບັດ.

1.1. ໃຫ້ສືບຕໍ່ເພີ່ມທະວີວຽກງານສຶກສາອົບຮົມການເມືອງ-ແນວຄິດ ພົນລະເມືອງພາຍໃນແຂວງບໍລິຄຳໄຊ ໃຫ້ສາມາດຮັບຮູ້ໄດ້ເຖິງຄວາມອັນຕະລາຍ ແລະ ເອົາໃຈໃສ່ມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ໂດຍການແນະນຳໃຫ້ທຸກຄົນຢູ່ໃນເປົ້າໝາຍໃຫ້ກະກຽມໄປຮັບວັກຊີນ.

1.2. ເພີ່ມທະວີການຊອກຫາຜູ້ຕິດເຊື້ອມາປິ່ນປົວ ແລະ ນຳເອົາຜູ້ໃກ້ຊິດມາກວດຫາເຊື້ອ ແລະ ຈຳກັດບໍລິເວນ ໃຫ້ຖືກຕ້ອງຕາມຫຼັກວິຊາການກ່ຽວຂ້ອງ; ພ້ອມທັງເພີ່ມການສັກວັກຊີນໃຫ້ເປົ້າໝາຍຕ່າງໆ ໃຫ້ໄດ້ຕາມຄາດ ໝາຍທີ່ວາງໄວ້.

1.3. ຫ້າມຈັດກອງປະຊຸມສຳມະນາ, ການໂຮມຊຸມນຸມ ຫຼື ຈັດກິດຈະກຳຕ່າງໆ ທີ່ມີຜູ້ເຂົ້າຮ່ວມຫຼາຍກວ່າ 20 ຄົນ; ຕໍ່ກັບການສະເໜີຂໍຈັດກອງປະຊຸມຂອງບັນດາກະຊວງ ຫຼື ຕ່າງແຂວງ ທີ່ຈະມາຈັດຢູ່ແຂວງຂອງພວກເຮົາແມ່ນໃຫ້ໂຈະຊົ່ວຄາວກ່ອນ.

1.4. ສືບຕໍ່ປິດດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີ ທາງບົກ ແລະ ທາງນ້ຳ ສຳລັບບຸກຄົນທົ່ວໄປ, ຍົກເວັ້ນຜູ້ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດຂັ້ນສູນກາງ. ລົດຂົນສົ່ງສິນຄ້າ ໃຫ້ປະຕິບັດຕາມມາດຕະການໃນຂໍ້ 2.5 ຂອງແຈ້ງການສະບັບນີ້.

1.5. ເພີ່ມທະວີການສັກວັກຊີນໃຫ້ເປົ້າໝາຍຕ່າງໆ ຕາມແຜນການ ແລະ ຄາດໝາຍທີ່ໄດ້ວາງໄວ້; ພ້ອມທັງສືບຕໍ່ເຝົ້າລະວັງຢູ່ບໍລິເວນຊາຍແດນຕ່າງໆ ດ້ວຍການຈັດຕັ້ງກຳລັງລາດຕາເວນ ຢ່າງເປັນປົກກະຕິ, ທັງເພີ່ມຄວາມເຂັ້ມງວດການກວດກາ, ວັດແທກອຸນຫະພູມ ຜູ້ຜ່ານດ່ານຊາຍແດນຕ່າງໆໃຫ້ເຄັ່ງຄັດ.

1.6. ສືບຕໍ່ປັບປຸງ ແລະ ຂະຫຍາຍສູນຈຳກັດບໍລິເວນ ຢູ່ບັນດາເມືອງທີ່ມີແຮງງານລາວຈຳນວນຫຼາຍກັບຄືນປະເທດ.

1.7. ຫ້າມບຸກຄົນເດີນທາງໄປເຂດທີ່ມີການຕິດເຊື້ອ (ເຂດ/ບ້ານແດງ) ຕາມການກຳນົດຂອງຄະນະສະເພາະກິດຂັ້ນສູນກາງ ແລະ ລະບຸໄວ້ໃນແຈ້ງການຂອງກະຊວງສາທາລະນະສຸກ ເລກທີ 0488/ສທ, ລົງວັນທີ 20 ພຶດສະພາ 2021; ຍົກເວັ້ນຜູ້ທີ່ມີຄວາມຈຳເປັນ ແລະ ໄດ້ຮັບການຢັ້ງຢືນຈາກອົງການປົກຄອງທ້ອງຖິ່ນ ຫຼື ກົມກອງທີ່ຕົນສັງກັດຢູ່; ຖ້າມີກໍລະນີໃດໆທີ່ເກີດຂຶ້ນ ມອບເປັນຄວາມຮັບຜິດຊອບໂດຍກົງຂອງຜູ້ທີ່ອະນຸມັດ;

- ໃນກໍລະນີບຸກຄົນໃດ ທີ່ບໍ່ໄດ້ສັກຢາວັກຊີນຄົບໂດສ ທີ່ເດີນທາງໄປເຂດທີ່ມີການຕິດເຊື້ອ (ເຂດ/ບ້ານແດງ) ຕ້ອງໄດ້ປະຕິບັດມາດຕະການປ້ອງກັນໂຄວິດ-19 ຢ່າງເຂັ້ມງວດ, ພາຍຫຼັງກັບມາ ຈະຕ້ອງໄດ້ກັກກັນຕົວເອງໃຫ້ຄົບ 14 ວັນ ຕາມລະບຽບການ.

1.8. ໂຈະການໃຫ້ບໍລິການຂົນສົ່ງໂດຍສານທາງບົກພາຍໃນແຂວງບໍລິຄຳໄຊຊົ່ວຄາວ.

1.9. ສືບຕໍ່ຫ້າມຈັດງານທາງສາສະໜາ, ງານບຸນປະເພນີຕ່າງໆ, ງານລ້ຽງ, ງານສັງສັນ ຫຼື ຊຸມແຊວທຸກຮູບແບບ ຢູ່ທຸກສະຖານທີ່, ຜູ້ທີ່ລະເມີດ ຈະຖືກນຳຕົວໄປຈຳກັດບໍລິເວນ ຢູ່ສູນຈຳກັດບໍລິເວນ ຕາມລະບຽບການທາງການແພດ, ພ້ອມທັງຖືກປັບໃໝ ແລະ ຮັບຜິດຊອບຄ່າໃຊ້ຈ່າຍທີ່ເກີດຂຶ້ນ ດ້ວຍຕົນເອງທັງຫມົດ; ກໍລະນີມີຄວາມຈຳເປັນ ແມ່ນໃຫ້ຂໍອະນຸຍາດຈາກຄະນະສະເພາະກິດຂັ້ນແຂວງ ຫຼື ເມືອງ. ສຳລັບການຄົບຮັ້ນງານສົບ, ງານສົ່ງສະການ ແລະ ເຮັດບຸນແຈກທານ ແມ່ນໃຫ້ປະຕິບັດມາດຕະການຂອງຄະນະສະເພາະກິດວາງອອກ ຢ່າງເຂັ້ມງວດ ເຊັ່ນ: ວັດແທກອຸນຫະພູມ, ຮັກສາໄລຍະຫ່າງ 1 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ນ້ຳຢາຂ້າເຊື້ອ (ເຈວລ້າງມື).

1.10. ສືບຕໍ່ປິດກິດຈະການຮ້ານບັນເທີງ, ຮ້ານຄາຣາໂອເກະ, ຮ້ານກິນ-ດື່ມ, ຮ້ານອິນເຕີເນັດ, ຮ້ານເກມ, ຮ້ານສະນຸກເກີ ແລະ ສັງວຽນຕີໄກ່.

1.11. ຫ້າມການສັນຈອນໄປ-ມາຂອງຄົນ ແລະ ພາຫານະຕັ້ງແຕ່ 22:00 – 5:00 ໂມງ.

1.12. ເຫັນດີໃຫ້ສືບຕໍ່ຮັບການຊ່ວຍເຫຼືອຈາກຜູ້ປະກອບການ, ສັງຄົມ ແລະ ພາກສ່ວນຕ່າງໆ ແຕ່ໃຫ້ຄະນະສະເພາະກິດ ຄົ້ນຄວ້າຮູບແບບການຮັບເຄື່ອງຊ່ວຍເຫຼືອດັ່ງກ່າວ ເພື່ອຮັບປະກັນບໍ່ໃຫ້ມີຄວາມສ່ຽງຕໍ່ການຕິດເຊື້ອພະຍາດ.

1.13. ສືບຕໍ່ເພີ່ມທະວີຄວາມເຂັ້ມງວດ ໃນການປະຕິບັດບັນດາມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ດ້ວຍການ ວັດແທກອຸນຫະພູມ, ຮັກສາໄລຍະຫ່າງຢ່າງໜ້ອຍ 1 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍນ້ຳສະອາດ ໃສ່ສະບຸ ຫຼື ເຈວລ້າງ ມື.

2. ມາດຕະການສືບຕໍ່ຜ່ອນຜັນ:

2.1. ສືບຕໍ່ອະນຸຍາດໃຫ້ອອກກຳລັງກາຍ, ຫຼິ້ນກິລາກາງແຈ້ງ ແລະ ໃນຮົ່ມ (ເຂດ/ບ້ານຂຽວ ແລະ ເຂດ/ບ້ານເຫຼືອງ) ໂດຍມີລາຍ ລະອຽດດັ່ງນີ້:

- ສືບຕໍ່ອະນຸຍາດໃຫ້ບໍລິການອອກກຳລັງກາຍຢູ່ສວນສາທາລະນະ ຫຼື ສະຖານທີ່ກາງແຈ້ງ ແລະ ໃນຮົ່ມທີ່ເໝາະສົມ ແຕ່ຕ້ອງ ໃສ່ຜ້າອັດປາກ-ດັງ, ຮັກສາໄລຍະຫ່າງບໍ່ໃຫ້ໜຸດ 2 ແມັດ, ບໍ່ໃຫ້ຈັບກຸ່ມກັນສົນທະນາ ຫຼື ເຮັດກິດຈະກຳອື່ນໆ ເກີນ 2 ຄົນ;
- ສືບຕໍ່ອະນຸຍາດໃຫ້ຫຼິ້ນກິລາກາງແຈ້ງ ແລະ ໃນຮົ່ມ ແຕ່ເຈົ້າຂອງສະຖານທີ່ ຫຼື ຜູ້ປະກອບການ ຕ້ອງມີປຶ້ມບັນທຶກຕິດຕາມຜູ້ ມາໃຊ້ບໍລິການ ເປັນຕົ້ນ: ຊື່ນາມສະກຸນ, ເລກບັດປະຈຳໂຕ, ເບີໂທລະສັບ, ທີ່ຢູ່, ອາຊີບ ຫຼື ບ່ອນປະຈຳການ, ຂໍ້ມູນອື່ນໆ ທີ່ຈຳເປັນ; ພ້ອມນັ້ນ ໃຫ້ມີການວັດແທກອຸນຫະພູມ, ຜູ້ໃຊ້ບໍລິການຕ້ອງໄດ້ຮັບວັກຊີນຕ້ານພະຍາດໂຄວິດ-19 1 ໂດສ ຫຼື 2 ໂດສ ແລະ ຫ້າມບໍ່ໃຫ້ມີການບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ; ນອກນັ້ນ ຕ້ອງປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມ ການແຜ່ເຊື້ອພະຍາດໂຄວິດ-19 ທີ່ຄະນະສະເພາະກິດວາງອອກ ຢ່າງເຂັ້ມງວດ;

2.2. ສືບຕໍ່ອະນຸຍາດໃຫ້ເປີດກິດຈະການຢູ່ເຂດ/ບ້ານຂຽວ ແລະ ເຂດ/ບ້ານເຫຼືອງ ເປັນຕົ້ນ: ຮ້ານເສີມສວຍ, ຮ້ານຕັດຜົມ, ເຮືອນ ພັກ, ໂຮງແຮມ, ຮ້ານອົມຢາພື້ນເມືອງ, ຮ້ານນວດ (ໂດຍຜູ້ໃຫ້ບໍລິການ ແລະ ຜູ້ຮັບບໍລິການ ຕ້ອງໄດ້ຮັບວັກຊີນຄົບໂດສ) ໃຫ້ປິດບໍລິການບໍ່ໃຫ້ກາຍ 20:00 ໂມງ, ສຸນການຄ້າ, ຮ້ານຂາຍຍົກ-ຂາຍຍ່ອຍ, ຕະຫຼາດ ສົດ, ສຸນອອກກຳລັງກາຍ-ກິລາໃນ ຮົ່ມ ແຕ່ຕ້ອງປະຕິບັດມາດຕະການ ຂອງຄະນະສະເພາະກິດປ້ອງກັນໂຄວິດ-19 ວາງອອກຢ່າງເຂັ້ມງວດ ເພື່ອປ້ອງກັນການ ຕິດເຊື້ອ ແລະ ແຜ່ເຊື້ອ ດ້ວຍການວັດແທກອຸນຫະພູມ, ຮັກສາໄລຍະຫ່າງ ຢ່າງໜ້ອຍ 01 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມື ດ້ວຍນ້ຳສະອາດ ໃສ່ສະບຸ ຫຼື ເຈວລ້າງມື;

2.3. ສືບຕໍ່ອະນຸຍາດໃຫ້ເປີດບໍລິການຢູ່ເຂດ/ບ້ານຂຽວ ແລະ ເຂດ/ບ້ານເຫຼືອງ ເປັນຕົ້ນ: ຮ້ານອາຫານ, ຮ້ານກາເຟ, ສວນອາຫານ, ລີ ສອດ, ສະຖານທີ່ທ່ອງທ່ຽວ ແຕ່ໃຫ້ຜູ້ປະກອບການ ຫຼື ເຈົ້າຂອງສະຖານທີ່ ປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຢ່າງເຂັ້ມງວດ; ຫ້າມບໍ່ໃຫ້ມີການບໍລິການເບຍ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າທຸກປະເພດ ຢ່າງເດັດຂາດ.

2.4. ສືບຕໍ່ອະນຸຍາດໃຫ້ເປີດການຮຽນ-ການສອນ ທຸກຊັ້ນຮຽນໃນສະຖານການສຶກສາ ແລະ ກິລາ ຢູ່ເຂດ/ບ້ານຂຽວ ປະກອບມີ: ການສຶກສາກ່ອນໄວຮຽນ, ການສຶກສາສາຍສາມັນ, ການສຶກສານອກໂຮງຮຽນ, ອາຊີວະສຶກສາ; ລວມທັງໂຮງຮຽນເຕັກນິກ ວິຊາຊີບ, ວິທະຍາໄລ; ສ່ວນເຂດ/ບ້ານເຫຼືອງ ມອບໃຫ້ຄະນະສະເພາະກິດເມືອງ ປະເມີນຄວາມສ່ຽງທີ່ອາດຈະເກີດຂຶ້ນ ເພື່ອ ສະເໜີຄະນະສະເພາະກິດແຂວງ ພິຈາລະນາ; ສຳລັບເຂດ/ບ້ານແດງ (ເຂດ/ບ້ານທີ່ມີການລະບາດໃນຊຸມຊົນ) ແມ່ນໃຫ້ປິດ ຊົ່ວຄາວ;

- ສືບຕໍ່ອະນຸຍາດໃຫ້ເປີດສຸນຝຶກອົບຮົມວິຊາຊີບ ແຕ່ຜູ້ເຂົ້າຮ່ວມຕ້ອງໄດ້ມີບັດສັກຢາວັກຊີນຄົບໂດສ ຈຶ່ງສາມາດເຂົ້າອົບຮົມ ໄດ້; ຖ້າບໍ່ໄດ້ຮັບການສັກວັກຊີນຄົບໂດສ ແລະ ເດີນທາງມາຈາກຕ່າງແຂວງ ຕ້ອງໄດ້ຈຳກັດບໍລິເວນຂອງຕົນເອງຈົນຄົບ 14 ວັນ ຈຶ່ງສາມາດເຂົ້າຝຶກອົບຮົມໄດ້;

2.5. ການເດີນທາງທ່ອໄປ ແລະ ການຂົນສົ່ງສິນຄ້າ ສາມາດດຳເນີນການໄດ້ເປັນປົກກະຕິ ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດໃນການ ເດີນທາງ; ຍົກເວັ້ນການເດີນທາງໄປພື້ນທີ່ໆມີຄວາມສ່ຽງ (ເຂດ/ບ້ານແດງ) ຕ້ອງໄດ້ຮັບອະນຸຍາດຈາກກົມກອງ ແລະ ຕ້ອງໄດ້ ຮັບວັກຊີນ 1 ໂດສ ຫຼື 2 ໂດສ; ສຳຫຼັບຄົນຕ່າງປະເທດທີ່ເດີນທາງເຂົ້າມາ ສປປ ລາວ ມີຈຸດປະສົງເດີນທາງເຂົ້າ-ອອກແຂວງບໍ ລິຄຳໄຊ ຕ້ອງແຈ້ງໜັງສືເດີນທາງ, ໃບຢັ້ງຢືນການຈຳກັດບໍລິເວນ ຄົບ 14 ວັນ ແລະ ໜັງສືອະນຸຍາດຈາກຄະນະສະເພາະກິດ ຂັ້ນສຸນກາງ ໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ໂດຍບໍ່ໃຫ້ມີການຈຳກັດບໍລິເວນ, ຍົກເວັ້ນຄົນຕ່າງປະເທດທີ່ເຮັດວຽກ ຫຼື ໄດ້ດຳລົງຊີວິດ ຢູ່ ສປປ ລາວ ມາໄລຍະໜຶ່ງແລ້ວ ແມ່ນໃຫ້ປະຕິບັດຄືກັນກັບພົນລະເມືອງລາວ.

2.6. ຜູ້ຂັບຂີ່ລົດ ເຂົ້າ-ອອກ ແຂວງທີ່ມີການລະບາດໃນຊຸມຊົນ ຕ້ອງແມ່ນຜູ້ທີ່ໄດ້ຮັບວັກຊີນຄົບໄດສ ໂດຍບໍ່ຕ້ອງອະນຸຍາດແຂວງ ປາຍທາງ, ບໍ່ໃຫ້ມີການຈຳກັດບໍລິເວນ ແລະ ຕ້ອງປະຕິບັດຕາມມາດຕະການທີ່ຄະນະສະເພາະກິດວາງອອກຢ່າງເຂັ້ມງວດ ເປັນຕົ້ນ: ແທກອຸນຫະພູມ, ຮັກສາໄລຍະຫ່າງ ຢ່າງໜ້ອຍ 01 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ເຈວລ້າງມື.

3. **ມາດຕະການຈັດຕັ້ງປະຕິບັດ:**

3.1. ສຳລັບຜູ້ທີ່ຕິດເຊື້ອ ພາຍຫຼັງໄດ້ຮັບການປິ່ນປົວ ແລະ ຊອກຫາເຊື້ອຄົບ 3 ເທື່ອ (ຜົນກວດເປັນລົບ) ແມ່ນສາມາດໃຫ້ກັບບ້ານໄດ້.

- ຜູ້ກັກກັນຢຸ່ສຸນກັກກັນຂອງແຂວງ ເຫັນດີກຳນົດການກັກກັນໃຫ້ຄົບກຳນົດ 14 ວັນ ພາຍຫຼັງກວດຫາເຊື້ອໄດ້ຜົນເລືອດເປັນລົບ ແມ່ນໃຫ້ສືບຕໍ່ໄປກັກກັນຢຸ່ສຸນຂອງເມືອງອີກ 14 ມື້; ພາຍຫຼັງຄົບຕາມກຳນົດ 28 ວັນ ກ່ອນຈະອອກຈາກສຸນ ແມ່ນໃຫ້ສັກວັກຊີນປ້ອງກັນໂຄວິດ-19 ຈອນສັນ ແອນ ຈອນສັນ ໃຫ້ຜູ້ກ່ຽວ ຈຶ່ງສາມາດກັບບ້ານໄດ້.
- ລ້ວນນັກສຶກສາທີ່ເດີນທາງກັບມາຈາກປະເທດຫວຽດນາມ ຫຼື ຄົນລາວ ທີ່ຜ່ານດ່ານສາກົນນ້ຳພາວ ທີ່ບໍ່ໄດ້ມີການກວດຫາເຊື້ອພະຍາດໂຄວິດ-19 ແມ່ນໃຫ້ກັກກັນຢຸ່ສຸນກັກກັນເມືອງຄຳເກີດຄົບ 14 ວັນ ແລ້ວໃຫ້ໄປສືບຕໍ່ກັກກັນຢຸ່ສຸນຂອງເມືອງທີ່ຕົນອາໃສຢຸ່ອີກ 14 ວັນ ຈຶ່ງອະນຸຍາດໃຫ້ກັບບ້ານໄດ້; ແຕ່ຖ້າໄດ້ຮັບວັກຊີກປ້ອງກັນໂຄວິດ-19 ຄົບໄດສ ແລະ ຄົບກຳນົດເວລາໜຶ່ງເດືອນຂຶ້ນໄປແລ້ວ ແມ່ນບໍ່ໃຫ້ມີການກັກກັນ.
- ສຳລັບແຮງງານລາວກັບຄືນທ້ອງຖິ່ນຂອງແຂວງບໍລິຄຳໄຊ ທີ່ຈຳກັດບໍລິເວນຢຸ່ສຸນຂອງບັນດາແຂວງ ກັກກັນຄົບກຳນົດ 14 ວັນແລ້ວ ໃຫ້ຄະນະຮັບຜິດຊອບ ຮັບ-ສົ່ງ ນຳໄປສືບຕໍ່ຈຳກັດບໍລິເວນຢຸ່ສຸນຂອງເມືອງທີ່ຜູ້ກ່ຽວອາໃສຢຸ່ໃຫ້ຄົບຕື່ມອີກ 14 ວັນ ຈຶ່ງສາມາດກັບບ້ານໄດ້.

3.2. ມອບໃຫ້ຄະນະສະເພາະກິດຂັ້ນເມືອງ ພິຈາລະນາຄົ້ນຄວ້າມາດຕະການຕ້ານການລະບາດຂອງພະຍາດໄຄວິດ-19 ໃນການເປີດໃຫ້ບໍລິການຈິດຕະການຕ່າງໆ ໃນເຂດ/ບ້ານແດງ ທີ່ເມືອງຂອງຕົນ.

- ເອົາໃຈໃສ່ຜັນຂະຫຍາຍແຈ້ງການສະບັບນີ້ ໃຫ້ເປັນອັນລະອຽດ, ມີຄວາມເອກກະພາບໃນການຈັດຕັ້ງປະຕິບັດ, ເຂັ້ມງວດ ແລະ ປະຕິບັດຢ່າງເຄັ່ງຄັດ; ພ້ອມນັ້ນ ໃຫ້ລົງເຜີຍແຜ່ໃຫ້ບັນດາບ້ານ, ແຕ່ລະຄອບຄົວ ໃຫ້ຮັບຮູ້ ແລະ ເຂົ້າໃຈໃນການມີສ່ວນຮ່ວມຕ້ານສະກັດກັ້ນ ແລະ ປ້ອງກັນການແຜ່ລະບາດຂອງພະຍາດດັ່ງກ່າວ; ກໍລະນີພົບເຫັນຜູ້ລະເມີດ ແມ່ນຕ້ອງດຳເນີນມາດຕະການເດັດຂາດ ຕາມກົດໝາຍ ແລະ ລະບຽບການກຳນົດ.
- ສືບຕໍ່ເອົາໃຈໃສ່ສຶກສາອົບຮົມອົງການປົກຄອງບ້ານ ແລະ ເອົາໃຈໃສ່ຕິດຕາມຢ່າງເຂັ້ມງວດ ຕໍ່ການຄຸ້ມຄອງແຮງງານລາວ ແລະ ຄົນຕ່າງປະເທດ ທີ່ລັກລອບຂ້າມແດນຜິດກົດໝາຍເຂົ້າມາບ້ານຂອງຕົນ ຖ້າຫາກຍັງລະເມີດຈະໄດ້ນຳໃຊ້ມາດຕະການຕໍ່ອົງການປົກຄອງບ້ານຢ່າງເດັດຂາດ ຖ້າມີກໍລະນີຫາກມີຄົນຕິດເຊື້ອ ແລະ ມີການລະບາດ; ພ້ອມທັງໃຫ້ມີມາດຕະການຕໍ່ຜູ້ລະເມີດ ແລະ ຜູ້ທີ່ເຊື່ອງອຳ-ປົກປິດຢ່າງເດັດຂາດ; ຖ້າມີກໍ່ລະນີໃດໆທີ່ເກີດຂຶ້ນ ຖືເປັນຄວາມຮັບຜິດຊອບໂດຍກົງຂອງການຈັດຕັ້ງບ້ານ;

3.3. ມອບໃຫ້ຄະນະສະເພາະກິດເມືອງປາກຊັນ, ທ່າພະບາດ ແລະ ປາກກະດິງ ສືບຕໍ່ຄົ້ນຄວ້າການອະນຸຍາດ-ຄຸ້ມຄອງ ແລະ ສ້າງບົດບັນທຶກມອບຄວາມຮັບຜິດຊອບຮ່ວມກັບການຈັດຕັ້ງບ້ານຢ່າງຂາດໄຕ ໃນການນຳໃຊ້ເຮືອຫາປາຂອງປະຊາຊົນ ເພື່ອຫາປາຕາມລຳນ້ຳຂອງໃນໄລຍະເວລາ ແຕ່ 08:00 ໂມງ ຫາ 18:00 ໂມງ; ໂດຍອີງໃສ່ສະພາບ ແລະ ຄວາມສາມາດໃນການຄຸ້ມຄອງໃຫ້ຮັບປະກັນໄດ້ບໍ່ໃຫ້ມີການສວຍໃຊ້ເຂົ້າໃນການລັກຂ້າມລອຍ ແລະ ໃຫ້ມີມາດຕະການຕໍ່ຜູ້ລະເມີດ ແລະ ຜູ້ທີ່ເຊື່ອງອຳ-ປົກປິດຢ່າງເດັດຂາດ; ຖ້າມີກໍ່ລະນີໃດໆທີ່ເກີດຂຶ້ນ ຖືເປັນຄວາມຮັບຜິດຊອບໂດຍກົງຂອງການຈັດຕັ້ງບ້ານ;

3.4. ມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງ ສືບຕໍ່ລົງຕິດຕາມ-ກວດກາການສຶກສາກ່ອນໄວຮຽນ ເພື່ອຮັບປະກັນໄດ້ມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອຂອງພະຍາດດັ່ງກ່າວ;

3.5. ມອບໃຫ້ພະແນກວັດທະນະທຳ ແລະ ການທ່ອງທ່ຽວແຂວງ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ສືບຕໍ່ອອກແຈ້ງການແນະນຳເຖິງພາກສ່ວນທີ່ຕົນຮັບຜິດຊອບ ກ່ຽວກັບການເພີ່ມທະວີ

ຄວາມເຂັ້ມງວດໃນການປະຕິບັດບັນດາມາດຕະການປ້ອງກັນການຕິດ ເຊື້ອ ແລະ ແຜ່ເຊື້ອ ໂດຍໃຫ້ຜູ້ປະກອບການຫ້າງຮ້ານ, ສູນການຄ້າ, ສະຖານທີ່ຫຼິ້ນກິລາ, ສູນອອກກຳລັງກາຍ, ເຮືອນພັກ, ໂຮງແຮມ, ລີສອດ, ສວນອາຫານ, ຮ້ານຣົມຢາພື້ນເມືອງ, ຮ້ານນວດ, ສະຖານທີ່ທ່ອງທ່ຽວ ແລະ ອື່ນໆ ໃຫ້ມີປຶ້ມບັນທຶກລົງທະບຽນຜູ້ມາໃຊ້ບໍລິການ ເປັນຕົ້ນ: ຊື່ນາມສະກຸນ, ເລກບັດປະຈຳໂຕ, ເບີໂທລະສັບ, ທີ່ຢູ່, ອາຊີບ ຫຼື ບ່ອນປະຈຳການ ແລະ ຂໍ້ມູນອື່ນໆ; ພ້ອມທັງມີການວັດແທກອຸນຫະພູມ, ຮັກສາໄລຍະຫ່າງ ຢ່າງໜ້ອຍ 01 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍນ້ຳສະອາດໃສ່ສະບູ ຫຼື ເຈວລ້າງມື;

3.6. ມອບໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ສືບຕໍ່ເປັນໃຈການປະສານສົມທົບກັບ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ແລະ ກອງບັນຊາການທະຫານແຂວງ ລົງໂຄສະນາເຜີຍແຜ່ສຶກສາອົບຮົມການເມືອງແນວຄິດ, ແນວທາງນະໂຍບາຍ ແລະ ລະບຽບກົດໝາຍຂອງ ສປປ ລາວ ຕໍ່ແຮງງານລາວທີ່ກັບຄືນປະເທດ ຢຸ່ສູນກັກກັນ ແລະ ສູນປົ່ນປົວຂອງແຂວງ; ສ່ວນດ້ານລະບຽບຫຼັກການພາຍໃນສູນກັກກັນ ແລະ ໂຮງໝໍສຸກເສີນ ມອບໃຫ້ພະແນກສາທາລະນະສຸກແຂວງ ແລະ ກອງບັນຊາການ ປກສ ແຂວງ ສືບຕໍ່ຈັດຕັ້ງປະຕິບັດດັ່ງທີ່ປະຕິບັດຜ່ານມາ;

- ສຳລັບການອອກຂ່າວ ແມ່ນໃຫ້ເພີ່ມຫົວຂໍ້ຂ່າວກ່ຽວກັບສະພາບການປົ່ນປົວແຮງງານລາວທີ່ກັບຄືນມາຈາກປະ ເທດໄກ້ຄຽງ ແລະ ວຽກງານອື່ນໆ ທີ່ເຫັນວ່າມີຄວາມສຳຄັນຕ້ອງໄດ້ແຈ້ງຕໍ່ສັງຄົມ ໃຫ້ມີສະຕິ ແລະ ກຽມຄວາມພ້ອມ ໃນການຮັບມື ແລະ ປ້ອງກັນ ພະຍາດໂຄວິດ-19 ຢ່າງທັນການ;
- ໃຫ້ສືບຕໍ່ໂຄສະນາເຜີຍແຜ່ມາດຕະການຕ່າງໆ ທີ່ລັດຖະບານ ກໍ່ຄະນະສະເພາະກິດແຂວງວາງອອກ ໃຫ້ສັງຄົມຮັບຮູ້ຢ່າງເປັນປົກກະຕິ ດ້ວຍຫຼາຍຮູບແບບ ເພື່ອຫຼຸດຜ່ອນການຕິດເຊື້ອ ແລະ ແຜ່ເຊື້ອພະຍາດ; ພ້ອມເອົາໃຈໃສ່ຕິດຕາມສະພາບພົ້ນເດັ່ນໃນສື່ສັງຄົມອອນລາຍ, ການເຜີຍແຜ່ ຫຼື ສົ່ງຕໍ່ຂໍ້ມູນທີ່ບໍ່ມີມູນຄວາມຈິງ ຫຼື ບິດເບືອນຄວາມຈິງ ແລ້ວດຳເນີນການກວດກາ ແລະ ແກ້ໄຂ;

3.7. ມອບໃຫ້ກອງບັນຊາການ ປກສ ແຂວງ ເປັນໃຈການປະສານສົມທົບກັບ ພະແນກ ຖວທ ແຂວງ ລົງກວດກາບັນດາຮ້າງຮ້ານ ທີ່ລະບຸໃນຂໍ້ 1.10 ຂອງແຈ້ງການສະບັບນີ້ຢ່າງເຂັ້ມງວດ; ນອກນັ້ນ ໃຫ້ເອົາໃຈໃສ່ກວດກາ ຮ້ານອາຫານ, ຮ້ານກາເຟ, ສວນອາຫານ, ລີສອດ, ສະຖານທີ່ທ່ອງທ່ຽວ ຫ້າມບໍ່ໃຫ້ມີການບໍລິການເບຍ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າທຸກປະເພດ; ກໍລະນີພົບເຫັນຜູ້ລະເມີດ ແມ່ນຕ້ອງດຳເນີນມາດຕະການເດັດຂາດ ຕາມກົດໝາຍ ແລະ ລະບຽບການກຳນົດ.

3.8. ມອບໃຫ້ພະແນກ ເຕັກໂນໂລຊີ ແລະ ການສື່ສານແຂວງ ສືບຕໍ່ເອົາໃຈໃສ່ຕິດຕາມຄຳແນະນຳການຈັດຕັ້ງປະຕິບັດ ການນຳໃຊ້ໂປແກຼມ LaoKYC ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງເຜີຍແຜ່ການນຳໃຊ້ໃຫ້ກວ້າງຂວາງ ໂດຍສະເພາະຢູ່ບັນດາດ່ານຊາດແດນ ແລະ ສະຖານທີ່ບໍລິການຕ່າງໆ.

3.9 ມອບໃຫ້ອົງການປົກຄອງເມືອງອົງການປົກຄອງບ້ານ ເອົາໃຈໃສ່ໃນການຕິດຕາມກວດກາການເຂົ້າເມືອງຂອງ ພາຫະນະ ແລະ ບຸກຄົນທີ່ເດີນທາງມາຈາກແຂວງທີ່ມີການລະບາດຂອງພະຍາດໂຄວິດ-19 ຈາກຊຸມຊົນຢ່າງເຂັ້ມງວດ.

ມອບໃຫ້ພະແນກການ, ຄະນະສະເພາະກິດຂັ້ນເມືອງ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ໃຫ້ຖືກຕ້ອງ ແລະ ເຂັ້ມງວດ ສອດຄ່ອງກັບສະພາບຕົວຈິງ ຂອງແຕ່ລະບ່ອນ; ກໍລະນີພົບເຫັນຜູ້ລະເມີດ ແມ່ນໃຫ້ດຳເນີນມາດຕະການເດັດຂາດ ຕາມກົດໝາຍ ແລະ ລະບຽບການກຳນົດ.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ຮອງເຈົ້າແຂວງບໍລິຄຳໄຊ
(ຫົວໜ້າຄະນະສະເພາະກິດຂັ້ນແຂວງ ປ້ອງກັນ ໂຄວິດ-19)

ຄຳແຫວນ ປັນຍານຸວົງ